EIE-06-256 REEPRO

Intelligent Energy Europe

# ໂຄງການສົ່ງເສີມການນຳໃຊ້ພະລັງງານທົດແທນຢ່າງມີປະສິດທິຜົນໃນບັນດາ ປະເທດທີ່ພວມພັດທະນາ

# Promotion of the Efficient Use of Renewable Energies in Developing Countries

# ປັດໃຈທາງເສດຖະກິດ-ສັງຄົມທີ່ກ່ຽວກັບການພະລັງງານ ຢູ່ ຊົນນະບົດແຫ່ງ ສປປ ລາວ

Energy related socio-economic factors in rural areas of Lao PDR


**ໂດຍ**

**ຮສ ດຣ ຄຳພອນ ບັນທະວົງ**, ຄະນະວິສະວະກຳສາດ, ມະຫາວິທະຍາໄລແຫ່ງຊາດລາວ

**ຮສ ແສງຣາຕຣີ ກິຖາວອນ**, ຄະນະວິສະວະກຳສາດ, ມະຫາວິທະຍາໄລແຫ່ງຊາດລາວ

**ອຈ ທອງວັນ ວິໄລຜົນ**, ຄະນະວິສະວະກຳສາດ, ມະຫາວິທະຍາໄລແຫ່ງຊາດລາວ



ກໍລະກົດ 2007



PDF created with pdfFactory Pro trial version www.pdffactory.com

# ສາລະບານ ເນື້ອໃນ

1 ຂໍ້ມູນທົ່ວໄປກ່ຽວກັບ ສປປ ລາວ (General information on Lao PDR ).....6

1.1 ກຸ່ມເປົ້າໝາຍ (Target groups).....8

1.1.1 ບັນຫາຂອງແມ່ຍິງ (Gender issues).....8

1.1.2 ແຫຼ່ງລາຍຮັບຕົ້ນຕໍຂອງຄອບຄົວ (main source of income).....10

1.1.3 ທີ່ຢູ່ອາໄສຕ່າງກັນ (Different areas of living).....12

2 ຂໍ້ມູນທາງເສດຖະກິດ-ສັງຄົມ (Socio-economic data).....13

2.1 ລາຍໄດ້ຂອງຄອບຄົວໃນແຕ່ລະກຸ່ມເປົ້າໝາຍ (Household incomes in different target groups)13

2.2 ຂະໜາດຂອງຄອບຄົວ (Household size).....19

2.3 ລະດັບການສຶກສາຂອງກຸ່ມເປົ້າໝາຍ (Education levels of target groups).....19

2.4 ລະດັບການສຶກສາໃນຄອບຄົວ (Literacy rate in household ).....21

2.5 ແຫຼ່ງພະລັງງານ (Sources of energy).....21

2.6 ອັດຕາສ່ວນແບ່ງຂອງແຫຼ່ງພະລັງງານ (Share of different sources of energy).....26

2.7 ລາຍຈ່າຍສຳລັບພະລັງງານ (Expenditure on different energy sources ).....26

2.8 ລາຄາພະລັງງານຊະນິດຕ່າງໆ (Prices of different energy sources).....27

2.9 ການໃຊ້ເວລາຫາຟືນ (wood collecting times).....28

2.10 ການຊົມໃຊ້ພະລັງງານ (Energy end use).....30

2.11 ຜົນກະທົບຕໍ່ສຸຂະພາບ (Health effects).....31

2.12 ສະຫຼຸບ (Conclusions).....31

3 ເອະສານຊ້ອນທ້າຍ.....31

3.1 ຂໍ້ມູນປະຊາກອນ.....31

3.2 ເອກະສານອ້າງອີງ.....32



PDF created with pdfFactory Pro trial version www.pdffactory.com

**ສາລະບານ ຮູບ**

ຮູບ 1 ແຜນທີ່ລະດັບສູງຂອງ ສປປ ລາວ (ແຫຼ່ງຂໍ້ມູນ: ກົມແຜນທີ່, ສຳນັກງານນາຍົກ)................................7

**ຮູບ 2 ເມືອງທຸກຍາກ ຂອງ ສປປ ລາວ (NGPES 2005)**..............................................................12

**ຮູບ 3 ແຜນການພັດທະນາລະບົບເຄືອຂ່າຍໄຟຟ້າສຳລັບການຊົມໃຊ້ພາຍໃນ (ໄຟຟ້າລາວ 2005)**...............13

**ຮູບ 4 ຈຳນວນສະມາຊິກຄອບຄົວທີ່ສ້າງລາຍຮັບ (NUOL-TERI, 2006)**...........................................14

ຮູບ 5. ລາຍໄດ້ຂອງບັນດາຄອບຄົວໃນຕົວເມືອງ ທີ່ຖືກສຳພາດ (NUOL-TERI, 2006)...........................15

ຮູບ 6 ຈຳນວນສະມາຊິກສ້າງລາຍໄດ້ຂອງຄອບຄົວຊົນນະບົດ (NUOL-TERI report, 2006).................16

ຮູບ 7 ລາຍໄດ້ໃນຄອບຄົວຊົນນະບົດ households (NUOL-TERI report, 2006).............................16

ຮູບ 8 ອັດຕາກວມສ່ວນຂອງລາຍໄດ້ຈາກກະສິກຳ (ສະເລັ່ຍ ສປປ ລາວ ) (ແຫຼ່ງຂໍ້ມູນ: **LECS 02/03)**........18

ຮູບ 9 ຂະໜາດຄອບຄົວໃນແຕ່ລະແຂວງ (ສຳຫຼວດພົນລະເມືອງ 2005)..............................................19

ຮູບ 10 **ອັດຕາສ່ວນໃນການຊົມໃຊ້ພະລັງງານ ໃນປີ 2000 ແລະ 2005 (ອີງຕາມຂໍ້ມູນ ຈາກກົມການຄ້າພາຍໃນ, ກະຊວງການຄ້າ ປີ 2006)**........................................................................22

ຮູບ 11 ການຊົມໃຊ້ໄຟຟ້າ ໃນແບບຕ່າງໆ (NSC 2006)................................................................25

ຮູບ 12 ສ່ວນແບ່ງໃນການນຳໃຊ້ພະລັງງານສຳລັບການແຕ່ງອາຫານ (ສະເລັ່ຍທົ່ວ ສປປ ລາວ ) (NSC 2006)..............................................................................................26

ຮູບ 13 ຄ່າໄຟຟ້າ ໃນແຕ່ລະເດືອນ ສຳລັບນະຄອນຫຼວງວຽງຈັນ (ການສຳຫຼວດ NUOL-TERI 2006).........27

Figure 14 ການໃຊ້ເວລາສຳລັບການເຄື່ອນໄຫວກິດຈະກຳທາງເສດຖະກິດ (Lao PDR average, LESC 2002/03)............................................................................................29



PDF created with pdfFactory Pro trial version www.pdffactory.com

**ສາລະບານຕາຕະລາງ**

ຕາຕະລາງ 1 ຂໍ້ມູນທົ່ວໄປຂອງ ສປປ ລາວ (ສສຊ, 2006)....................................................................6

ຕາຕະລາງ 2 ບັນດາອາຊີບຢູ່ ສປປ ລາວ (ສຳຫຼວດພົນລະເມືອງ 2005, NSC 2006) ............................11

ຕາຕະລາງ 3 ພົນລະເມືອງ ອາຍຸ 10 ແລະ ສູງກວ່າ (ສຳຫຼວດພົນລະເມືອງ 2005)..................................11

ຕາຕະລາງ 4. ລາຍຮັບຕໍ່ປີຈາກການຜະລິດກະສິກຳ, x1000 ກີບ ......................................................17

ຕາຕະລາງ 5 ກິດຈະກຳການສ້າງລາຍໄດ້ (ພົນລະເມືອງ 10+)..........................................................18

ຕາຕະລາງ 6 ຂະໜາດຂອງຄອບຄົວ (ສຳຫຼວດພົນລະເມືອງ 2005) ....................................................19

ຕາຕະລາງ 7 ລະດັບການສຶກສາ (ສຳຫຼວດ 2005)..........................................................................20

ຕາຕະລາງ 8 ລະດັບຄວາມຮູ້ໜັງສື ຂອງພົນລະເມືອງ ອາຍຸ 15+ (ສຳຫຼວດ 2005).................................21

ຕາຕະລາງ 9 ການຊົມໃຊ້ແຫຼພະລັງງານສຳລັບຊ່ວງປີ 1996-2005 ...................................................22

ຕາຕະລາງ 10. ອັດຕາສ່ວນໃນການຊົມໃຊ້ພະລັງງານໃນຊ່ວງ 1996-2005 ຢູ່ ສປປ ລາວ (ກະຊວງການຄ້າ 2006) ..................................................................................................................23

ຕາຕະລາງ 11 ແຫຼ່ງພະລັງງານສຳລັບແຕ່ງອາຫານ (Energy sources for cooking) (ສຳຫຼວດ 2005).....23

ຕາຕະລາງ 12 ສະຖິຕິການໄດ້ໃຊ້ໄຟຟ້າ ໃນປີ 2005 (ສຳຫຼວດ 2005)...............................................24

ຕາຕະລາງ 13 ອັດຕາການຕິດຕັ້ງໄຟຟ້າ (MEM, 2004)...................................................................25

ຕາຕະລາງ 14 ຄ່າໄຟຟ້າຕາຂ່າຍ ຢູ່ ສປປ ລາວ (EDL 2004 [7]).....................................................27

ຕາຕະລາງ 15 ການໃຊ້ຈ່າຍຄ່າພະລັງງານ (Ghimire et al, 2003) ..................................................28

ຕາຕະລາງ 16 ການໃຊ້ເວລາສຳລັບກິດຈະກຳໃນຂະແໜງການເສດຖະກິດຕ່າງໆ (LECS 2002/03) .........29

ຕາຕະລາງ 17 ການປ່ຽນແປງຂໍ້ມູນດ້ານປະຊາກອນຂອງ ສປປ ລາວ ລະຫວ່າງ 1995 ແລະ 2005 (ການສຳຫຼວດພົນລະເມືອງ 1995 ແລະ 2005)...........................................................31



PDF created with pdfFactory Pro trial version www.pdffactory.com

**ສາລະບານອັກສອນຫຍໍ້**

| | |
|---|---|
| GDP | ລວມຍອດຜະລິດຕະພັນພາຍໃນ Gross Domestic Products |
| EDL | ບໍລິສັດໄຟຟ້າລາວ Electricité Du Lao PDR |
| MEM | ກະຊວງພະລັງງານແລະບໍ່ແຮ່ Ministry of Energy and Mines |
| NSC | ສູນສະຖິຕິແຫ່ງຊາດ National Statistics Centre |
| NUOL | ມະຫາວິທະຍາໄລແຫ່ງຊາດລາວ National University of Lao PDR |
| SPRE | ໂຄງການຕິດຕັ້ງໄຟຟ້າຊົນນະບົດ ສຳລັບບັນດາແຂວງພາກໃຕ້ The Southern Province Rural Electrification program |



PDF created with pdfFactory Pro trial version www.pdffactory.com

# ປັດໃຈທາງເສດຖະກິດ-ສັງຄົມ ທີ່ກ່ຽວກັບການພະລັງງານ ຢູ່ ຊົນນະບົດແຫ່ງ ສປປ ລາວ

## (Energy related socio-economic factors in rural areas in Lao PDR)

## 1 ຂໍ້ມູນທົ່ວໄປກ່ຽວກັບ ສປປ ລາວ (General information on Lao PDR )

ສປປ ລາວ ເປັນປະເທດໜຶ່ງທີ່ຕັ້ງຢູ່ໃຈກາງຂອງແຫຼມອິນດູຈີນ, ມີຊາຍແດນຕິດກັບປະເທດຫວຽດນາມຢູ່ທາງທິດຕາເວັນອອກ, ກັບຈີນ-ທາງທິດເໜືອ, ກຳປູເຈຍ-ທາງໃຕ້ ແລະ ໄທ ກັບພະມ້າ ທາງທິດຕາເວັນຕົກ. ສປປ ລາວຖືກຈັດໃນກຸ່ມປະເທດດ້ອຍພັດທະນາທີ່ສຸດໃນໂລກ. ເຖິງວ່າໃນຊ່ວງສອງທົດສະຫວັດທີ່ຜ່ານມາ ສປປ ລາວໄດ້ມີຄວາມພະຍາຍາມຢ່າງຫຼາຍການ ເພື່ອປັບປຸງເງື່ອນໄຂການດຳລົງຊີວິດຂອງປະຊາຊົນ, ໂດຍສະເພາະຊາວຊົນນະບົດ, ແຕ່ ສປປ ລາວກໍຍັງເປັນປະເທດທີ່ທຸກຈົນ ໂດຍລາຍຮັບ GDP ຕໍ່ຫົວຄົນ ປະມານ 375 US$ ໃນປີ 2003. ປະມານ 31% ຂອງພົນລະເມືອງທັງໝົດ ຍັງດຳລົງຊີວິດໃນເງື່ອນໄຂຕ່ຳກວ່າຂີດຄວາມທຸກຈົນ ຄື ມີລາຍຮັບ ຕ່ຳກວ່າ 1,5 US$ ໃນແຕ່ລະວັນ (SPREII, [1])

ຊົນນະບົດກວມສ່ວນໃຫຍ່ເນື້ອທີ່ຂອງປະເທດ ແລະມີພົນລະເມືອງສ່ວນຫຼາຍ (73%) ເປັນຊາວຊົນນະບົດ (ຕາຕະລາງ 1. ຂໍ້ມູນ: ການສຳຫຼວດພົນລະເມືອງແຫ່ງຊາດປີ 2005). ປະມານ 51,50% ແລະ 21,31% ຂອງພົນລະເມືອງ ທີ່ດຳບົງຊີວິດໃນເຂດຊົນນະບົດ ທີ່ມີເສັ້ນທາງ ແລະບໍ່ມີເສັ້ນທາງເຂົ້າເຖິງ. ສປປ ລາວ ເປັນປະເທດ ທີ່ມີພົນລະເມືອງໜ້ອຍທີ່ສຸດໃນກຸ່ມປະເທດເອເຊຍຕາເວັນອອກສ່ຽງໃຕ້, ໂດຍມີຄວາມໜາແໜ້ນພຽງ 24 ຄົນ ຕໍ່ ໜຶ່ງກິໂລຕາແມັດ. ຕົວເລກນີ້ ຍິ່ງຕ່ຳລົງຫຼາຍສຳລັບເຂດຊົນນະບົດ, ໂດຍສະເພາະ ເຂດຊົນນະບົດຫ່າງໄກ ສອກຫຼີກ.

**ຕາຕະລາງ 1 ຂໍ້ມູນທົ່ວໄປຂອງ ສປປ ລາວ (ສສຊ, 2006)**

| **ລາຍການ** | **ຂໍ້ມູນ** | **ໝາຍເຫດ** |
|---|---:|---|
| **ເນື້ອທີ່ທັງໝົດ, km²** | 236.800 | |
| **ແຂວງ**[1] | 18 | |
| **ເມືອງ** | 141 | |
| **ບ້ານ** | 10.552 | |
| **ປະຊາກອນ** | | |
| ທົ່ວ ສປປ ລາວ | 5.621.982 | |
| ຍິງ | 50,19% | |
| ຊາຍ | 49,81% | |
| ອັດຕາສ່ວນ ຊາຍ/ຍິງ | 99,87% | |
| ເປີເຊັນຊາວຊົນນະບົດ | 27,1% | |

(ບໍ່ແນ່ໃຈ ~0,1%)

[1] ໃນປະຈຸບັນ ເຂດພິເສດໄຊສົມບູນ ໄດ້ຖືກຫຍຸບຮວມເຂົ້າກັບແຂວງວຽງຈັນແລ້ວ (ຍັງແຕ່ 16 ແຂວງແລະນະຄອນຫຼວງ)



PDF created with pdfFactory Pro trial version www.pdffactory.com

| | | |
|---|---|---|
| ເປີເຊັນຊາວຊົນນະບົດ ທີ່ມີເສັ້ນທາງ | 51,50% | |
| ເປີເຊັນຊາວຊົນນະບົດ ທີ່ບໍ່ມີເສັ້ນທາງ | 21,31% | |
| ຄວາມໜາແໜ້າຂອງພົນລະເມືອງ, ຄົນ/km$^2$ | 23,7 | |
| **ອັດຕາຄວາມຮູ້ໜັງສື, ພົນລະເມືອງ ອາຍຸ 15+** | | |
| ທົ່ວ ສປປ ລາວ | 72,7% | |
| ຍິງ | 63,2% | |
| ຊາຍ | 82,5% | |
| ອັດຕາສ່ວນ ຊາຍ/ຍິງ | 89,3% | |
| ເປີເຊັນຊາວຊົນນະບົດ | 69,7% | |
| ເປີເຊັນຊາວຊົນນະບົດ ທີ່ມີເສັ້ນທາງ | 53,9% | |
| **ອາຍຸຍືນສະເລ່ຍ (ປີ)** | | |
| ຍິງ | 63 | |
| ຊາຍ | 59 | |




**ຮູບ 1 ແຜນທີ່ລະດັບສູງຂອງ ສປປ ລາວ (ແຫຼ່ງຂໍ້ມູນ: ກົມແຜນທີ່, ສຳນັກງານນາຍົກ)**

ດ້ານການປົກຄອງ ສປປ ລາວ ຖືກແບ່ງເປັນ 16 ແຂວງ, 1 ເຂດພິເສດໄຊສົມບູນ ແລະ ນະຄອນຫຼວງວຽງຈັນ. ຫົວໜ່ວຍການປົກຄອງທີ່ນ້ອຍກວ່າ ແມ່ນ ເມືອງ (141) ແລະບ້ານ (10552) (NSC, **2006**).



PDF created with pdfFactory Pro trial version www.pdffactory.com

ຂະໜາດສະເລ່ຍຂອງບ້ານ ມີ 91 ຄອບຄົວສຳລັບທົ່ວປະເທດ, ສູງສຸດ (253) ແມ່ນຢູ່ນະຄອນຫຼວງວຽງຈັນ ແລະ ຕ່ຳສຸດ (49) ຢູ່ຜົ້ງສາລີ ຊຶ່ງເປັນແຂວງເໜືອສຸດຂອງປະເທດ.

ລັກສະນະເດັ່ນຂອງຊົນນະບົດລາວ ເວົ້າລວມແມ່ນລະບົບສິ່ງອຳນວຍຄວາມສະດວກຍັງບໍ່ທັນໄດ້ຮັບການພັດທະນາເທົ່າທີ່ຄວນ. ອີງຕາມຕົວເລກການສຳຫຼວດພົນລະເມືອງແລະທີ່ຢູ່ອາໄສທົ່ວປະເທດໃນປີ 2005, ມີພຽງ 12% (1291 ບ້ານ) ຂອງຈຳນວນບ້ານທັງໝົດທີ່ຖືວ່າ ເປັນບ້ານໃນເມືອງ, 54% (5721) ບ້ານມີຖະໜົນເຂົ້າເຖິງ ແລະຍັງອີກ 34% (3541ບ້ານ) ບໍ່ມີຖະໜົນເຂົ້າເຖິງ. ປະມານ 7021 ຂອງຈຳນວນບ້ານທັງໝົດ 10553 (ກວມ 66,53%) ໄດ້ມີໄຟຟ້າໃຊ້ແລ້ວ. ມີພຽງ 675 ບ້ານ (6,40%) ທີ່ມີລະບົບນ້ຳສະອາດໃຊ້ ແລະ 3757 (7,48%) ມີສຸກສາລາເປັນຂອງບ້ານ.

ບ້ານທີ່ຖືກຈັດວ່າ ເປັນບ້ານໃນເມືອງ ຕ້ອງມີຄົບ 3 ໃນ 5 ເງື່ອນໄຂ ດັ່ງຕໍ່ໄປນີ້:

1. ບ້ານຢູ່ໃນເຂດເທດສະບານເມືອງຫຼືແຂວງ
2. ມີໄຟຟ້າໃຊ້ແລ້ວຫຼາຍກວ່າ 70% ຂອງຈຳນວນຄອບຄົວໃນບ້ານ
3. ມີນ້ຳປະປາໃຊ້ ຫຼາຍກວ່າ 70% ຂອງຈຳນວນຄອບຄົວ
4. ມີຖະໜົນເຂົ້າເຖິງໃນທຸກລະດູການ
5. ມີຕະຫຼາດຄົງທີ່ ຊຶ່ງເປີດທຳງານທຸກວັນແລະຕະຫຼອດວັນ

ເຂດນອກລະບົບຖືກກຳນົດເປັນເຂດ ທີ່ຮອດປີ 2020 ຈະບໍ່ສາມາດເຊື່ອມຕໍ່ກັບເຄືອຂ່າຍໄຟຟ້າແຫ່ງຊາດ. ເວົ້າລວມແລ້ວ, ເຂດນອກລະບົບໄຟຟ້າຍັງຂາດສິ່ງອຳນວຍຄວາມສະດວກຂັ້ນພື້ນຖານ ເຊັ່ນ ຖະໜົນຫົນທາງ, ການສື່ສານ, ນ້ຳສະອາດ ແລະການບໍລິການດ້ານພະລັງງານ. ອີງຕາມການຕີລາຄາຂອງກະຊວງພະລັງງານແລະບໍ່ແຮ່ (ເມື່ອກ່ອນແມ່ນກະຊວງອຸດສາຫະກຳແລະຫັດຖະກຳ), ຮອດປີ 2020, ປະມານ 75% ຂອງຈຳນວນຄອບຄົວຊົນນະບົດ ຈະຖືກເຊື່ອມຕໍ່ກັບໄຟຟ້າເຄືອຂ່າຍ ແລະອີກ 15% ຫຼື ປະມານ 150,000 ຄອບຄົວ ຈະຕ້ອງໃຊ້ໄຟຟ້ານອກລະບົບ, ເຊັ່ນ ໄຟຟ້າແສງຕາເວັນ, ນ້ຳຕົກຂະໜາດນ້ອຍ, ເຄື່ອງຈັກໄຟຟ້ານ້ຳມັນຂະໜາດນ້ອຍ, ສະຖານີສາກໝໍ້ໄຟ.

## 1.1 ກຸ່ມເປົ້າໝາຍ (Target groups)

ການຈັດເລືອກກຸ່ມເປົ້າໝາຍອາດໄປຕາມປັດໃຈຕໍ່ໄປນີ້:

### 1.1.1 ບັນຫາຂອງແມ່ຍິງ (Gender issues)

ແມ່ຍິງຢູ່ ສປປ ລາວ ກວມອັດຕາສ່ວນເຖິງ 50,19%, ຊຶ່ງຕົວເລກຈະແຕກຕ່າງເລັກນ້ອຍສຳລັບເຂດຕົວເມືອງ, ເຂດຊົນນະບົດມີເສັ້ນທາງແລະບໍ່ມີເສັ້ນທາງ ຄື 49,9, 50,2 ແລະ 50,7 %, ຕາມລຳດັບ (ຕາຕະລາງ 2). ປະມານ 71% ຂອງແມ່ຍິງຊົນນະບົດອາຍຸແຕ່ 10 ປີຂຶ້ນໄປຢຶດອາຊີບໃນຂົງເຂດເສດຖະກິດ (ທຽບກັບຜູ້ຊາຍ 69,52%), ໃນເມື່ອມີພຽງ 28% - ບໍ່ຢູ່ໃນຂົງເຂດເສດຖະກິດ, ທຽບກັບ 29,38% ສຳລັບຜູ້ຊາຍ


PDF created with pdfFactory Pro trial version www.pdffactory.com

(ຕາຕະລາງ **3**). ອັດຕາສ່ວນຫວ່າງງານຂອງແມ່ຍິງອາຍຸ 10+ ໃນຂົງເຂດເສດຖະກິດ (0,3%) ແມ່ນຕ່ຳກວ່າເພດຊາຍ (2,2%) (NSC 2006).

ແມ່ຍິງລາວມີບົດບາດສຳຄັນຫຼາຍໃນຂົງເຂດວຽກງານກະສິກຳແລະຂົງເຂດເສດຖະກິດອື່ນໆ, ແລະກ່ອນ ອື່ນໝົດແມ່ຍິງຍັງມີພາລະຮັບຜິດຊອບດ້ານອາຫານແລະຄວາມສົມບູນພູນສຸກຂອງຄອບຄົວອີກດ້ວຍ. ແມ່ຍິງ ຊາວກະສິກອນ ກວມເຖິງ 85,4% ຂອງຈຳນວນແມ່ຍິງໃນຂົງເຂດເສດຖະກິດ (ທຽບກັບ 78,3%ສຳລັບຜູ້ຊາຍ) (NSC 2006). ລັດຖະບານ ສປປ ລາວ ຮັບຮູ້ວ່າ ຖ້າຫາກປັດສະຈາກການມີສ່ວນຮ່ວມຂອງແມ່ຍິງຈະບໍ່ສາ ມາດບັນລຸເປົ້າໝາຍໃນການຫຼຸດຜ່ອນຄວາມທຸກຈົນ, ການປັບປຸງການສຶກສາແຫ່ງຊາດ, ສາທາລະນະສຸກ ແລະຕົວຊີ້ບອກອື່ນໆດ້ານປະຊາກອນ, ໂດຍສະເພາະແມ່ນການປະກອບສ່ວນຂອງແມ່ຍິງທີ່ທຸກຍາກ ແລະຊົນ ເຜົ່າສ່ວນໜ້ອຍ (NPGES [4]).

ເພາະສະນັ້ນ, ລັດຖະບານຈຶ່ງໄດ້ດຳເນີນບັນດາບາດກ້າວໃນຂົງເຂດເສດຖະກິດຕົ້ນຕໍ ແລະຜ່ານບັນດາໂຄງການລະດັບຊາດ ເພື່ອ: ສະໜັບສະໜູນກິດຈະກຳທາງເສດຖະກິດຂອງແມ່ຍິງ ທີ່ທຸກຍາກ; ປັບປຸງການ ເຂົ້າເຖິງການບໍລິການຂັ້ນພື້ນຖານ ເຊັ່ນ ການສຶກສາ ແລະສຸຂະອານາໄມ, ແລະແຫຼ່ງຊັບພະຍາກອນ; ດຶງດູດເຂົາເຈົ້າເຂົ້າຮ່ວມການກຳນົດນະໂຍບາຍ, ແລະເວົ້າລວມແລ້ວ, ໄດ້ຄຳນຶງເຖິງຄວາມຕ້ອງການທຸກຢ່າງ ຂອງແມ່ຍິງ ໃນການກຳນົດນະໂຍບາຍແຫ່ງຊາດ.

ການສົ່ງເສີມຄວາມສະເໝີພາບລະຫວ່າງຍິງຊາຍ ເປັນຈຸດປະສົງສຳຄັນແຫ່ງຊາດ, ຊຶ່ງມັນໄດ້ລະບຸໄວ້ໃນມາດຕາ 22 ແລະ24 ຂອງລັດຖະທຳມະນູນ ສະບັບປີ 1991, ຢູ່ໃນການຢືນຢັນຕໍ່ສາກົນ ເຊັ່ນ, ສົນທິສັນຍາວ່າດ້ວຍການລົບລ້າງທຸກຮູບແບບການຈຳແນກຕໍ່ຕ້ານແມ່ຍິງ (the Convention on the Elimination of All Forms of Discrimination Against Women) ແລະໃນອານຸກຳມະການແຫ່ງຊາດ ວ່າດ້ວຍຄວາມກ້າວໜ້າຂອງແມ່ຍິງ ແຫ່ງ ສປປ ລາວ (National Commission for the Advancement of Women ສປປ ລາວ (NCAW-Lao). ການຮັບປະກັນຄວາມເທົ່າທຽມກັນໃນການເຂົ້າເຖິງການບໍລິການ ຂັ້ນ ພື້ນຖານ ແລະແຫຼ່ງຊັບພະຍາກອນ ແມ່ນຄວາມຍຸດຕິທຳ (ຂັ້ນພື້ນຖານ), ປະສິດທິພາບ (ແມ່ຍິງທຸກຍາກແມ່ນ ແຫຼ່ງຊັບພະຍາກອນອັນລ້ຳຄ່າ) ແລະພຶດຕິກຳ (ການສະໜັບສະໜູນຂອງແມ່ຍິງແມ່ນສິ່ງຈຳເປັນເພື່ອການປະຕິບັດ ບັນດານະໂຍບາຍແຫ່ງຊາດວ່າດ້ວຍການຫຼຸດຜ່ອນການເຮັດໄຮ່ແບບເລື່ອນລອຍ, ຍຸດຕິການປູກຝິ່ນ, ການພັດທະນາດ້ານ ການສຶກສາ, ສຸຂະອານາໄມແລະປະຊາກອນ). ພາຍໃຕ້ຂໍ້ກຳນົດຂອງ NCAW-Lao ສະບັບໃໝ່, ໄດ້ມີຄວາມຄາດຫວັງວ່າ ບັນນດາກະຊວງ, ຈະສ້າງແຜນຍຸດທະສາດແລະແຜນປະຕິບັດການຂອງຕົນຂຶ້ນເພື່ອສົ່ງເສີມສິດສະເຫມີ ພາບຍິງ-ຊາຍໃນລະດັບຊາດ, ແຂວງ, ເມືອງແລະບ້ານ[2].

ແມ່ຍິງຢູ່ ສປປ ລາວເຊັ່ນດຽວກັນກັບຢູ່ບັນດາປະເທດດ້ອຍພັດທະນາອື່ນໆ, ມີບົດບາດສຳຄັນໃນຄວາມສະດວກສະບາຍແລະຄວາມສົມບູນພູນສຸກຂອງຄອບຄົວ. ແມ່ຍິງມັກຈະກາຍເປັນຜູ້ຫາເງິນສຳຄັນ ສຳລັການໃຊ້ຈ່າຍຕ່າງໆໃນບຄອບຄົວ, ຊຶ່ງໄດ້ມາຈາກກິດຈະກຳການສ້າງລາຍຮັບຕ່າງໆ. ສະນັ້ນ, ການບໍລິການດ້ານພະ ລັງງານທີ່ດີກວ່າ ຈະຊ່ວຍແມ່ຍິງໃຫ້ມີໂອກາດສ້າງລາຍຮັບໃຫ້ແກ່ຄອບຄົວຫຼາຍຂຶ້ນ. ທຸລະກິດຂະໜາດຄອບຄົວ,

[2] ຂໍ້ແນະນຳຕ່າງໆໄດ້ຮັບການພັດທະນາຂຶ້ນສຳລັບແຜນດຳເນີນການແຫ່ງຊາດວ່າດ້ວຍແມ່ຍິງ ເພື່ອປະສົມປະສານຍຸດທະຍາດກ່ຽວກັບແມ່ຍິງ ແລະແຜນດຳເນີນການຂອງບັນດາກະຊວງ, ອົງການແລະການຈັດຕັ້ງມະຫາຊົນຕ່າງໆ, ພາຍໃຕ້ການປະສານງານຂອງ NCAW-Lao.



PDF created with pdfFactory Pro trial version www.pdffactory.com

ເຊັ່ນ ການແປຮູບອາຫານ, ຫັດຖະກຳ, ຮ້ານອາຫານ, ອື່ນໆ ອາດເປັນໄປໄດ້ ຖ້າຫາກມີການບໍລິການ ດ້ານພະລັງງານທີ່ດີກວ່າແລະເຂົ້າເຖິງງາຍກວ່າສຳລັບແມ່ຍິງ.

ຕາມເຄີຍ, ການຂາດການສຶກສາແລະໂອກາດທາງເສດຖະກິດ ໄດ້ປັກດັນແມ່ຍິງເຂົ້າສູ່ ການດຳເນີນກິດຈະການຂະໜາດນ້ອຍ (GRID, 2004 [3]). ຈາກຕາຕະລາງ 2, ເຫັນວ່າ ແມ່ຍິງສ່ວນຫຼາຍ (71%) ຍຶດອາຊີບ ທີ່ບໍ່ມີຄ່າຈ້າງ (ສ່ວນຫຼາຍຈະເປັນວຽກຍ້າວການເຮືອນ), ເມື່ອທຽບໃສ່ 29% ສຳລັບຜູ້ຊາຍ. ນັກທຸລະ ກິດເພດຍິງ ມີຂີດຈຳກັດດ້ານການສຶກສາແລະປະສົບການ. ເຂົາເຈົ້າດ້ອຍໂອກາດເພື່ອເຂົ້າເຖິງການສຶກສາ ຫຼື ການຝຶກອົບຮົມເນື່ອງຈາກວ່າ, ດ້ານໜຶ່ງ, ຮີດຄອງປະເພນີ ທີ່ບໍ່ອະນຸຍາດໃຫ້ແມ່ຍິງໄປໄກຈາກບ້ານ; ອີກດ້ານໜຶ່ງ, ບົດບາດຕາມປະເພນີຂອງແມ່ຍິງ ແມ່ນຄວາມຮັບຜິດຊອບດູແລຄອບຄົວ, ແລະເພາະສະນັ້ນ ຈຶ່ງດ້ອຍໂອກາດພັດທະນາຕົນເອງ.

| |
|---|
| ບັນຫາຂອງແມ່ຍິງ:<br>"ຫຼາຍກວ່າ 85% ຂອງແມ່ຍິງລາວແມ່ນຊາວນາ, ຊຶ່ງເຂົາເຈົ້າຕື່ນແຕ່ 3-4 ໂມງເຊົ້າ ເພື່ອຕຳເຂົ້າ, ກຽມອາຫານ ແລະວຽກເຮືອນວຽກຊານອື່ນໆ ກ່ອນເຂົາເຈົ້າຈະອອກໄປນາ. ໃນຊ່ວງລະດູຝົນ ເຂົາເຈົ້າເຮັດວຽກແຕ່ເຊົ້າເຖິງຄ່ຳໃນແຕ່ລະວັນ. ຕອນກັບບ້ານ, ເຂົາເຈົ້າຫາຟືນໄປພ້ອມ. ໃນຕອນຄ່ຳ, ແມ່ຍິງຕ້ອງໃກຽມອາຫານ, ຊັກເຄື່ອງແລະອາບ ນ້ຳໃຫ້ເດັກນ້ອຍດ ແລ້ວຈຶ່ງໄປພົບປະໝູ່ເພື່ອນ. ຖ້າເຂົ້າເຈົ້າຫາກມີເວລາຫວ່າງອີກ,ເຂົາເຈົ້າຈະຜະລິດຫັດຖະ ກຳ"<br>(Source: ADB, Northern Master Plan Study, 2002) |

### 1.1.2 ແຫຼ່ງລາຍຮັບຕົ້ນຕໍຂອງຄອບຄົວ (main source of income)

ການແບ່ງກຸ່ມເປົ້າໝາຍຕາມແຫຼ່ງລາຍຮັບຂອງຊາວຊົນນະບົດ ຢູ່ ສປປ ລາວ ອີງໃສ່ປັດໃຈຕໍ່ໄປນີ້:

- ກະສິກຳແລະການປະໂມງ (ຊາວນາ, ຊາວລ້ຽງສັດ, ຊາວສວນ, ຊາວປະໂມງ, ແລະອາຊີບປະສົມລະຫວ່າງບັນດາອາຊີບດັ່ງກ່າວ)
  - ອາຊີບທີ່ບໍ່ນອນໃນຂົງເຂດກະສິກຳ (ມີຮ້ານຂາຍເຄື່ອງ, ຊ່າງຫັດຖະກຳ, ຜູ້ໃຫ້ບໍລິການ, ຮ້ານອາຫານ)
  - ອາຊີບທີ່ບໍ່ນອນໃນຂົງເຂດເສດຖະກິດ (ພະນັກງານ ລັດຖະກອນ)
  - ອື່ນໆ: ຜູ້ທີ່ບໍ່ມີລາຍໄດ້, ເຊັ່ນ ຜູ້ຫວ່າງງານ, ຜູ້ສູງອາຍຸ, ເດັກນ້ອຍ, ຄົນພິການ

**ອາຊີບ**

ອາຊີບຕ່າງໆ ຢູ່ ສປປ ລາວ ຖືກສະແດງໃຫ້ເຫັນໃນຕາຕະລາງ 2. ຈາກຕາຕະລາງເຫັນວ່າ, ພົນລະເມືອງທີ່ເຮັດວຽກໃຫ້ຕົນເອງ (self-employed) (42%) ແລະວຽກ ທີ່ບໍ່ມີຄ່າຈ້າງ (46%) ກວມສ່ວນຂ້ອນຂ້າງຫຼາຍ. ແມ່ຍິງເຮັດວຽກ ກວມອັດຕາສ່ວນ 38% ຂອງຈຳນວນພົນລະເມືອງເຮັດວຽກໃນ ສປປ ລາວ. ດັ່ງທີ່ເວົ້າມາໃນຂ້າງເທິງ ເນື່ອງຈາກແມ່ຍິງດ້ອຍການສຶກສາກວ່າ ຈຶ່ງຖືກກົດດັນໃຫ້ເຮັດອາຊີບ ທີ່ມີຄ່າຈ້າງຕ່ຳ ຫຼື ບໍ່ມີຄ່າຈ້າງເລີຍ, ຊຶ່ງກວມເຖິງ 71% ຂອງຈຳນວນພົນລະເມືອງເຮັດວຽກລັກສະນະນີ້ທັງໝົດ.



PDF created with pdfFactory Pro trial version www.pdffactory.com

**ຕາຕະລາງ 2 ບັນດາອາຊີບຢູ່ ສປປ ລາວ (ສຳຫຼວດພົນລະເມືອງ 2005, NSC 2006)**

| | ປະເພດອາຊີບ | ຜູ້ທີ່ເຮັດວຽກ | ກວມອັດຕາສ່ວນ (%) | ແມ່ຍິງ % | ຜູ້ຊາຍ % |
|---|---|---|---|---|---|
| 1 | ພະນັກງານຂອງລັດ | 168.388 | 6,1 | 31 | 69 |
| 2 | ພະນັກງານລັດວິສາຫະກິດ (ຂອງລັດ) | 11.446 | 0,4 | 33 | 67 |
| 3 | ພະນັກງານວິສາຫະກິດຫຸ້ນສ່ວນລັດ—ເອກະຊົນ (ລັດ—ເອກະຊົນ) | 121.786 | 4,4 | 40 | 60 |
| 4 | ວິສາຫະກິດເອກະຊົນ | 19.486 | 0,7 | 27 | 73 |
| 5 | ຜູ້ໃຊ້ແຮງງານ | 7.210 | 0,3 | 31 | 69 |
| 6 | ເຮັດວຽກໃຫ້ຕົນເອງ | 1.149.906 | 42,0 | 32 | 68 |
| 7 | ວຽກບໍ່ມີຄ່າຈ້າງ (ວຽກໃນຄອບຄົວ) | 1.260.671 | 46,0 | 71 | 29 |
| | ລວມພົນລະເມືອງ ທີ່ເຮັດວຽກ | 2.738.893 | 100,00 | 38 | 62 |

ແມ່ຍິງຊົນນະບົດກວມເອົາສ່ວນໃຫຍ່ໃນຈຳນວນພົນລະເມືອງ ອາຍຸ 10 ປີຂຶ້ນໄປ ທີ່ເຮັດວຽກງານເສດຖະກິດ. ອີງຕາມຜົນການສຳຫຼວດພົນລະເມືອງແລະທີ່ຢູ່ອາໄສ ປີ 2005, ແມ່ຍິງກວມອັດຕາສ່ວນເຖິງ 71% ຂອງຈຳນວນພົນລະເມືອງຊົນນະບົດອາຍຸແຕ່ 10 ປີຂຶ້ນໄປ ທີ່ເຮັດວຽກງານເສດຖະກິດ (ທຽບກັບ 69,5% ສຳລັບເພດຊາຍ)(ຕາຕະລາງ 3). ສຳລັບໃນເມືອງ, ຕົວເລກດັ່ງກ່າວແມ່ນ 55% ແລະ 69,7%, ຕາມລຳດັບ.

ກົງກັນຂ້າມ, ຢູ່ຕົວເມືອງແມ່ຍິງເຮັດວຽກໃນຂົງເຂດບໍ່ແມ່ນເສດຖະກິດ ກວມອັດຕາສ່ວນຫຼາຍກວ່າ ເພດຊາຍ (44% vs. 38%). ອັດຕາສ່ວນແມ່ຍິງຊົນນະບົດ ທີ່ເຮັດວຽກບໍ່ແມ່ນໃນຂົງເຂດເສດຖະກິດກວມ 28% ທຽບກັບ 29% ສຳລັບເພດຊາຍ.

**ຕາຕະລາງ 3 ພົນລະເມືອງ ອາຍຸ 10 ແລະ ສູງກວ່າ (ສຳຫຼວດພົນລະເມືອງ 2005)**

| | ລາຍການ | ລວມ | ແມ່ຍິງ(%) | ຜູ້ຊາຍ(%) | ໝາຍເຫດ |
|---|---|---|---|---|---|
| 1 | **ພົນລະເມືອງ** | | | | |
| | ສປປ ລາວ | 5.621.982 | 50,18% | 49,82% | |
| | ຕົວເມືອງ | 1.522.137 | 49,87% | 50,13% | |
| | ຊົນນະບົດ | 4.099.845 | 50,29% | 49,71% | |
| 2 | **ພົນລະເມືອງ 10+** | | | | |
| | ສປປ ລາວ | 4.171.199 | 50,38% | 49,62% | |
| | ຕົວເມືອງ | 1.230.698 | 49,97% | 50,03% | |
| | ຊົນນະບົດ | 2.940.501 | 50,48% | 49,52% | |
| 3 | **ພົນລະເມືອງ 10+, ເຮັດວຽກງານເສດຖະກິດ** | | | | |
| | ສປປ ລາວ | 2.778.019 | 66,30% | 66,80% | |
| | ຕົວເມືອງ | 710.113 | 54,80% | 60,70% | |
| | ຊົນນະບົດ | 2.067.906 | 71,16% | 69,52% | |
| 4 | **ພົນລະເມືອງ 10+, ເຮັດວຽກງານບໍ່ແມ່ນໃນຂົງເຂດເສດຖະກິດ** | | | | |
| | ສປປ ລາວ | 1.351.468 | 32,70% | 32,10% | |



PDF created with pdfFactory Pro trial version www.pdffactory.com

| | | | | | |
|---|---|---|---|---|---|
| | ຕົວເມືອງ | 508.278 | 44,20% | 38,30% | |
| | ຊົນນະບົດ | 872.595 | 27,81% | 29,38% | |
| 5 | **ພົນລະເມືອງ 10+, not sure or not indicated** | | | | |
| | ສປປ ລາວ | 41.712 | 1,00% | 1,10% | |
| | ຕົວເມືອງ | 12.307 | 1,00% | 1,00% | |
| | ຊົນນະບົດ | 29.405 | 1,03% | 1,10% | |

### 1.1.3 ທີ່ຢູ່ອາໄສຕ່າງກັນ (Different areas of living)

ໃນທາງພູມສາດ ສປປ ລາວ ແບ່ງອອກເປັນ ສາມພາກແຕກຕ່າງກັນ ຄື: ພາກເໜືອ (ລວມມີແຂວງຜົ້ງສາລີ, ຫຼວງນ້ຳທາ, ບໍ່ແກ້ວ, ອຸດົມໄຊ, ຫົວພັນ, ຫຼວງພະບາງແລະໄຊຍະບູລີ); ພາກກາງ (ຊຽງຂວາງ, ແຂວງວຽງຈັນ, ນະຄອນຫຼວງວຽງຈັນ, ບໍລິຄຳໄຊ, ຄຳມ່ວນແລະສະຫວັນນະເຂດ) ແລະພາກໃຕ້ (ສາລະວັນ, ຈຳປາສັກ, ເຊກອງແລະອັດຕະປື). ເຂດພາກເໜືອແລະດ້ານຕາເວັນອອກສ່ຽງເໜືອຂອງປະເທດ ມີພູຜາສູງຊັນກວມສ່ວນໃຫຍ່. ສ່ວນທົ່ງພຽງ ແມ່ນຢູ່ພາກກາງແລະໃຕ້ (ຮູບ 1).




**ຮູບ 2 ເມືອງທຸກຍາກ ຂອງ ສປປ ລາວ (NGPES 2005)**

ຈາກຮູບ 1 ແລະ 2 ເຫັນວ່າ ເຂດເມືອງທຸກຍາກຫຼາຍ **(ສີແດງ)** ແລະທຸກຍາກ (ສີສົ້ມ) ຂອງ ສປປ ລາວ ສ່ວນຫຼາຍແມ່ນນອນໃນເຂດ ທີ່ທຸລະກັນດານ ຫຼື ຫ່າງໄກສອກຫຼີກ. ຈາກຮູບ 3 ເຫັນໄດ້ອີກວ່າ ການພັດທະນາເຄືອຂ່າຍໄຟຟ້າ ເວົ້າລວມແມ່ນເວັ້ນບັນດາເຂດດັ່ງກ່າວ. ເຄືອຂ່າຍທີ່ມີແລ້ວ, ພວມສ້າງ ຫຼື ມີແຜນຈະສ້າງ ກໍ່


PDF created with pdfFactory Pro trial version www.pdffactory.com

ລ້ອນແລ້ວແຕ່ໄປຕາມເຂດທົ່ງພຽງ ເລາະຕາມແມ່ນ້ຳຂອງ ແລະສາຂາສຳຄັນຈຳນວນໜຶ່ງ, ໃນເມື່ອບັນດາເມືອງທຸກຍາກພັດນອນຢູ່ໃນເຂດພູສູງ (ຮູບ 2-3).




**ຮູບ 3 ແຜນການພັດທະນາລະບົບເຄືອຂ່າຍໄຟຟ້າສຳລັບການຊົມໃຊ້ພາຍໃນ (ໄຟຟ້າລາວ 2005)**

ເຂດນອກລະບົບໄຟຟ້າຖືກກຳນົດວ່າ ແມ່ນເຂດ ທີ່ບໍ່ອາດເຊື່ອມຕໍ່ກັບລະບົບໄຟຟ້າໄດ້ຮອດປີ 2020. ເວົ້າລວມ, ເຂດນອກລະບົບ ຍັງບໍ່ທັນມີການພັດທະນາດ້ານການຄົມມະນາຄົມ ແລະສິ່ງອຳນວຍຄວາມສະດວກຂັ້ນພື້ນຖານອື່ນໆ ເຊັ່ນ ການສື່ສານ, ການສະໜອງນ້ຳສະອາດ, ການບໍລິການດ້ານພະລັງງານ, ອື່ນໆ. ອີງຕາມການຕີລາຄາຂອງກະຊວງພະລັງງານແລະບໍ່ແຮ່, (ຊຶ່ງໃນເມື່ອກ່ອນ ແມ່ນກະຊວງອຸດສາຫະກຳແລະຫັດຖະກຳ) , ຮອດທ້າຍປີ 2020, ຈະມີ 75% ຂອງຈຳນວນຄອບຄົວຊົນນະບົດ ຖືກເຊື່ອມຕໍ່ກັບເຄືອຂ່າຍໄຟຟ້າແຫ່ງຊາດ ແລະອີກ 15%, ຫຼື ປະມານ 150.000 ຄອວຄົວ ຈະໃຊ້ໄຟນອກລະບົບ, ເຊັ່ນ ໄຟຟ້າແສງຕາເວັນສຳລັບຄອບຄົວ, ໄຟຟ້ານ້ຳຕົກຂະໜາດນ້ອຍໆ, ເຄື່ອງຈັກໄຟຟ້ານ້ຳມັນ ທີ່ມີການປັບປຸງ, ສະຖານີສາກໝໍ້ໄຟ.

# 2 ຂໍ້ມູນທາງເສດຖະກິດ-ສັງຄົມ (Socio-economic data)

## 2.1 ລາຍໄດ້ຂອງຄອບຄົວໃນແຕ່ລະກຸ່ມເປົ້າໝາຍ (Household incomes in different target groups)



PDF created with pdfFactory Pro trial version www.pdffactory.com

ຮູບ 4-5 ສະແດງຜົນການສຳຫຼວດໂດຍໃຊ້ຟອມສອບຖາມ, ຊຶ່ງດຳເນີນໂດຍທີມງານຂອງ ຄະນະວິສະວະກຳສາດ (ມະຫາວິທະຍາໄລແຫ່ງຊາດ) ສຳລັບໂຄງການສຶກສາຮ່ວມກັນລະຫວ່າງ ມ.ຊ. ແລະ ສະຖາບັນ TERI (ປະເທດອິນເດຍ) (NUOL-TERI, 2006, [5])[3]. ການສຳ*ວດດຳເນີນໄປສຳລັບ 100 ຄອບຄົວ ໃນນະຄອນຫຼວງວຽງຈັນ ແລະ 42 ຄອບຄົວຢູ່ບ້ານນ້ຳມ້າດາວ, ເມືອງພູຄູນ (ແຂວງຫຼວງພະບາງ). ຮູບ 4 ສະແດງຈຳນວນສະມາຊິກໃນຄອບຄົວ ທີ່ສາມາດສ້າງລາຍໄດ້ສຳລັບຄອບຄົວ ຈາກການປະກອບອາຊີບຕ່າງໆ. ເຫັນວ່າ ຄອບຄົວທີ່ຖືກສຳພາດສ່ວນຫຼາຍມີສະມາຊິກ 1 ຫຼື 2 ຄົນ ເຮັດວຽກເປັນພະນັກງານຂອງລັດ ແລະໃນທຸລະກິດຂອງຕົນເອງ, ຕາມດ້ວຍໃນຂົງເຂດທຸລະກິດເອກະຊົນ ແລະ ວຽກວ່າຈ້າງລາຍວັນ.




| | 1 | 2 | 3 | 4 | >4 |
|---|---|---|---|---|---|
| Any other | 6 | 0 | 0 | 0 | 0 |
| Daily labour (casual – daily wages) | 9 | 3 | 0 | 0 | 0 |
| Own Business/ shop | 45 | 7 | 1 | 0 | 0 |
| Private service (montly salary) | 15 | 5 | 2 | 0 | 0 |
| Government service | 33 | 16 | 5 | 2 | 0 |

**ຮູບ 4 ຈຳນວນສະມາຊິກຄອບຄົວທີ່ສ້າງລາຍຮັບ (NUOL-TERI, 2006)**

ຈາກຕາຕະລາງ 5 ເຫັນໄດ້ວ່າ ບັນດາຄອບຄົວສ່ວນຫຼາຍ ທີ່ມີສະມາຊິກເປັນພະນັກງານຂອງລັດ ຫຼື ເຮັດວຽກໃນທຸລະກິດຂອງຕົນເອງ ມີລາຍໄດ້ ບໍ່ເກີນ 100$ ຕໍ່ເດືອນ. ລາຍໄດ້ສູງກວ່ານີ້ ອາດເປັນຍ້ອນມີຫຼາຍຄົນເຮັດວຽກ, ແຕ່ບໍ່ແມ່ນຍ້ອນເງິນເດືອນສູງ.

ສະຖານະການສຳລັບຊາວ ຊົນນະບົດແມ່ນແຕກຕ່າງຈາກສິ່ງທີ່ກ່າວມານັ້ນ. ແຫຼ່ງລາຍໄດ້ຕົ້ນຕໍ ແມ່ນການເຮັດໄຮ່ ເຮັດນາແລະຂາຍສັດລ້ຽງ. ເວົ້າລວມ, ຄອບຄົວຊົນນະບົດມີຄວາມຜູກພັນກັບການກະເສດ ແບບທຳ

[3] TERI: **The Energy and Resources Institute (India)**



PDF created with pdfFactory Pro trial version www.pdffactory.com

ມະຊາດ, ຊຶ່ງຕົ້ນຕໍແມ່ນການປູກເຂົ້າ ໂດຍໃຊ້ເຄື່ອງມືແບບຫຼ້າຫຼັງ. ໃນບາງທ້ອງຖິ່ນ ອາດມີແຫຼ່ງລາຍໄດ້ອື່ນໆ ເຊັ່ນ ການເຮັດສວນ, ຕ່ຳຫູກ, ການປະໂມງ, ການບໍລິການ, ການຄ້າຂາຍ, ອື່ນໆ




| | <=45$ | <=50$ | <=100$ | <=200$ | >200$ |
|---|---|---|---|---|---|
| Government service | 20 | 8 | 19 | 4 | 5 |
| Private service (montly salary) | 5 | 1 | 7 | 6 | 3 |
| Own Business/ shop | 12 | 6 | 19 | 10 | 6 |
| Daily labour (casual – daily wages) | 2 | 1 | 6 | 1 | 2 |
| Any other | 2 | 0 | 3 | 1 | 0 |

**ຮູບ 5. ລາຍໄດ້ຂອງບັນດາຄອບຄົວໃນຕົວເມືອງ ທີ່ຖືກສຳພາດ (NUOL-TERI, 2006)**

ຮູບs 6-7 ສະແດງຜົນສຳຫຼວດຢູ່ບ້ານນ້ຳມ້າດາວ, ຊຶ່ງເປັນບ້ານຊົນເຜົ່າມົ້ງ ຢູ່ໃກ້ເທດສະບານເມືອງພູຄູນ, ແຂວງຫຼວງພະບາງ. ອາຊີບຫຼັກຂອງຊາວບ້ານແມ່ນການເຮັດໄຮ່ເຂົ້າ, ລ້ຽງສັດ (ງົວ, ແບ້, ໝູ, ສັດປີກ), :ຮັດສວນ (ປູກຜັກແລະເຜືອກມັນຕ່າງໆ).

ຈາກຮູບ 6, ຄອບຄົວຊົນນະບົດ ສ່ວນຫຼາຍມີສະມາຊິກ 2 ຄົນ ເຮັດໄຮ່, 1 ຄົນໄປລ້ຽງສັດ, ຫຼື 1 ຄົນເຮັດສວນຢ່າງໜ້ອຍ. ເປັນສິ່ງແຜ່ຫຼາຍໃນຊົນນະບົດຂອງ ສປປ ລາວ ແມ່ນ ມີຄອບຄົວຈຳນວນໜຶ່ງ ເປີດທຸລະກິດຂອງຕົນເອງ ເຊັ່ນການບໍລິການການຂົນສົ່ງ, ຂາຍອາຫານ, ສີເຂົ້າ, ຫຼື ເປີດຮ້ານຂາຍເຄື່ອງຍ່ອຍທີ່ຂາຍທຸກຢ່າງ,ທີ່ຈຳເປັນ ຄືນັບແຕ່ ເຂົ້າໜົມ ຮອດ ເຄື່ອງອີເລັກໂຕຣນິກຂະໜາດນ້ອຍ.

ຈາກຮູບ 7 ເຫັນວ່າ ລາຍໄດ້ຕົ້ນຕໍແມ່ນມາຈາກການປູເຂົ້າ, ການລ້ຽງສັດ ແລະປູກຝັງ.



PDF created with pdfFactory Pro trial version www.pdffactory.com




ຮູບ 6  ຈຳນວນສະມາຊິກສ້າງລາຍໄດ້ຂອງຄອບຄົວຊົນນະບົດ (NUOL-TERI report, 2006)




ຮູບ 7 ລາຍໄດ້ໃນຄອບຄົວຊົນນະບົດ households (NUOL-TERI report, 2006)

ບົດລາຍງານກ່ຽວກັບຜົນການສຳຫຼວດລາຍຮັບລາຍຈ່າຍໃນຄອບຄົວຂອງ ສປປ ລາວ, ຊຶ່ງດຳເນີນໂດຍ ສູນສະຖິຕິແຫ່ງຊາດ LECS2003/03 [6] ກໍ່ສະແດງໃຫ້ເຫັນລາຍຮັບໃນລັກສະນະດຽວກັນ. ລາຍຮັບສຳຄັນ (ປະມານ 50%ສຳລັບຄອບຄົວຊົນນະບົດ ແລະ 48%ສຳລັບຄອບຄົວໃນເມືອງ) ແມ່ນມາຈາກການປູກເຂົ້າ. ການປູກເຂົ້າແມ່ນເພື່ອຊົມໃຊ້ເອງ ແລະເພື່ອຂາຍ.



PDF created with pdfFactory Pro trial version www.pdffactory.com

**ຕາຕະລາງ 4. ລາຍຮັບຕໍ່ປີຈາກການຜະລິດກະສິກຳ, x1000 ກີບ[4]**

| No. | ແຂວງ | Grain | Vegeຕາ ຕະລາງ & fruit | Livestock | Fish | Forestry | Other | ລວມ |
|---|---|---|---|---|---|---|---|---|
| 1 | ນະຄອນຫຼວງວຽງຈັນ | 2.224 | 231 | 511 | 435 | 50 | 557 | 4.008 |
| 2 | ຜົ້ງສາລີ | 3.127 | 888 | 950 | 529 | - | 277 | 5.771 |
| 3 | ຫຼວງນ້ຳທາ | 3.749 | 968 | 1.282 | 461 | 70 | 448 | 6.978 |
| 4 | ອຸດົມໄຊ | 2.971 | 872 | 1.154 | 534 | 19 | 313 | 5.863 |
| 5 | ບໍ່ແກ້ວ | 2.626 | 1.034 | 2.162 | 829 | - | 539 | 7.190 |
| 6 | ຫຼວງພະບາງ | 2.376 | 678 | 1.615 | 425 | 87 | 142 | 5.323 |
| 7 | ຫົວພັນ | 3.934 | 776 | 1.194 | 715 | 73 | 217 | 6.909 |
| 8 | ໄຊຍະບູລີ | 8.112 | 990 | 1.833 | 657 | 19 | 302 | 11.913 |
| 9 | ຊຽງຂວາງ | 3.957 | 976 | 1.867 | 602 | 21 | 291 | 7.714 |
| 10 | ວຽງຈັນ | 2.673 | 553 | 1.767 | 811 | 152 | 752 | 6.708 |
| 11 | ບໍລິຄຳໄຊ | 2.471 | 934 | 917 | 1.593 | 33 | 98 | 6.046 |
| 12 | ຄຳມ່ວນ | 2.804 | 740 | 1.277 | 1.254 | 35 | 327 | 6.437 |
| 13 | ສະຫວັນນະເຂດ | 2.948 | 609 | 1.374 | 807 | 10 | 338 | 6.086 |
| 14 | ສາລະວັນ | 2.719 | 761 | 836 | 469 | 5 | 169 | 4.959 |
| 15 | ເຊກອງ | 2.217 | 1.079 | 2.003 | 466 | 1 | 141 | 5.907 |
| 16 | ຈຳປາສັກ | 2.441 | 573 | 664 | 786 | 29 | 91 | 4.584 |
| 17 | ອັດຕະປື | 2.355 | 510 | 1.139 | 1.221 | 8 | 97 | 5.330 |
| 18 | ເຂດພິເສດໄຊສົມບູນ | 2.259 | 881 | 1.710 | 761 | 61 | 233 | 5.905 |
| | ສປປ ລາວ ລວມ | 3.109 | 781 | 1.348 | 742 | 37 | 296 | 6.313 |
| | % ກວມສ່ວນ | 49% | 12% | 21% | 12% | 1% | 5% | 100% |
| | ຕົວເມືອງ average | 1.691 | 379 | 543 | 508 | 37 | 375 | 3.533 |
| | % ກວມສ່ວນ | 48% | 11% | 15% | 14% | 1% | 11% | 100% |
| | ຊົນນະບົດ average | 3.598 | 797,0 | 1.460,0 | 805,0 | 41,0 | 292,0 | 6.993 |
| | % ກວມສ່ວນ | 51% | 11% | 21% | 12% | 1% | 4% | 100% |
| | ພາກເໜືອ | 3.842 | 887 | 1.456 | 593 | 38 | 320 | 7.135 |
| | % ກວມສ່ວນ | 54% | 12% | 20% | 8% | 1% | 4% | 100% |
| | ພາກກາງ | 2.846 | 674 | 1.286 | 917 | 50 | 394 | 6.167 |
| | % ກວມສ່ວນ | 46% | 11% | 21% | 15% | 1% | 6% | 100% |
| | ພາກໃຕ້ | 2.433 | 731 | 1.161 | 736 | 11 | 125 | 5.195 |
| | % ກວມສ່ວນ | 47% | 14% | 22% | 14% | 0% | 2% | 100% |

Source: Lao Expenditure & Consumption survey 02/03. NSC. 2004)

[4] ອັດຕາແລກປ່ຽນສະເລັ່ຍໃນປີ 2003 ປະມານ 10500 LAK / 1 US$



PDF created with pdfFactory Pro trial version www.pdffactory.com




ຮູບ 8 ອັດຕາກວມສ່ວນຂອງລາຍໄດ້ຈາກກະສິກຳ (ສະເລັ່ຍ ສປປ ລາວ ) (ແຫຼ່ງຂໍ້ມູນ: **LECS 02/03)**

ດັ່ງເຫັນໄດ້ຈາກຕາຕະລາງ 5, ລາຍໄດ້ຈາກການຜະລິດກະສິກຳຂອງຄອບຄົວໃນຕົວເມືອງ ຕ່ຳກວ່າຄອບຄົວຊົນນະບົດ (3.533.000 ກີບ ແລະ 6.993.000 ກີບ ຕາມລຳດັບ). ພາກເໜືອມີລາຍຮັບຈາກການກະສິກຳສູງສຸດ ສ່ວນພາກໃຕ້-ຕ່ຳສຸດ (7.135.000 ກີບ ແລະ 5.195.000 ກີບ ຕາມລຳດັບ).

ການເຄື່ອນໄຫວກຳຈະກຳທາງເສດຖະກິດຂອງພົນລະເມືອງ ອາຍຸ 10+ ສະແດງໃນຕາຕະລາງ 6. ພົນລະເມືອງລາວ ໂດຍສະເລັ່ຍ ໃຊ້ເວລາ ຫຼາຍກວ່າໝູ່ໃນການຜະລິດກະສິກຳ, ຖັດມາແມ່ນ:ຮັດທຸລະກິດຂອງຕົນເອງ. ສິ່ງນີ້ເປັນການຢືນຢັນອີກວ່າ ພົນລະເມືອງລາວສ່ວນຫຼາຍແມ່ນຊາວກະສິກອນ ແລະເຮັດວຽກຂອງຕົນເອງ.

**ຕາຕະລາງ 5 ກິດຈະກຳການສ້າງລາຍໄດ້ (ພົນລະເມືອງ 10+)**

| ກິດຈະກຳ | ຈຳນວນຊົ່ວໂມງ/ມື້ | ຄິດໄລ່ເປັນ% |
|---|---|---|
| ເປັນຄົນງານ | 0,5 | 11 |
| ທຸລະກິດຂອງຕົນ | 0,7 | 14 |
| ວຽກງານກະສິກຳ | 2,4 | 49 |
| ຫາຟືນລຕັກນ້ຳ | 0,3 | 7 |
| ລ່າສັດ/ຫາປາ | 0,5 | 11 |
| ກໍ່ສ້າງ | 0,1 | 1 |
| ຫັດຖະກຳ | 0,3 | 7 |
| ລວມ ຊົ່ວໂມງ | 4,8 | 100 |



PDF created with pdfFactory Pro trial version www.pdffactory.com

## 2.2 ຂະໜາດຂອງຄອບຄົວ (Household size)

ຂະໜາດຂອງຄອບຄົວ ຢູ່ເຂດຊົນນະບົດ ຈະໃຫຍ່ກວ່າຄອບຄົວໃນຕົວເມືອງ. ຂະໜາດຄອບຄົວສະເລັ່ຍໃນທົ່ວ ສປປ ລາວ ຫຼຸດລົງໜ້ອຍໜຶ່ງ ທຽບຈາກ 6,0 (ໃນປີ1995) to 5,9 (2005). ຄອບຄົວ ໃຫຍ່ສຸດແມ່ນຢູ່ເຂດຊົນນະບົດ ທີ່ບໍ່ມີເສັ້ນທາງເຂົ້າເຖິງ (6,1), ໃນເມື່ອຕ່ຳສຸດແມ່ນຢູ່ໃນເມືອງ 5,7 (ຕາຕະລາງ 7).

**ຕາຕະລາງ 6 ຂະໜາດຂອງຄອບຄົວ (ສຳຫຼວດພົນລະເມືອງ 2005)**

| ລາຍການ | ສຳຫຼວດປີ 2005 |
|---|---|
| **ຂະໜາດຂອງຄອບຄົວ, ຄົນ/ຄຄ** | |
| ສປປ ລາວ | 5.9 |
| ຕົວເມືອງ | 5.7 |
| ຊົນນະບົດ ມີເສັ້ນທາງເຂົ້າເຖິງ | 5.9 |
| ຊົນນະບົດ ບໍ່ມີເສັ້ນທາງເຂົ້າເຖິງ | 6.1 |

ຮູບ 9 ສະແດງຂະໜາດຄອບຄົວໄປຕາມແຕ່ລະແຂວງຂອງ ສປປ ລາວ. ຄອບຄົວໃຫຍ່ສຸດ (ຫຼາຍກວ່າ 6 ຄົນ) ແມ່ນຢູ່ເຂດຊົນນະບົດຂອງບັນດາແຂວງ ທີ່ມີພົນລະເມືອງເປັນຊົນເຜົ່າສ່ວນໜ້ອຍ (ຜົ້ງສາລີ, ອຸດົມໄຊ, ບໍ່ແກ້ວ, ຫົວພັນ, ໄຊຍະບູລີ, ຊຽງຂວາງ, ບໍລິຄຳໄຊ, ສະຫວັນນະເຂດ, ເຊກອງ, ເຂດພິເສດໄຊສົມບູນ).




**ຮູບ 9 ຂະໜາດຄອບຄົວໃນແຕ່ລະແຂວງ (ສຳຫຼວດພົນລະເມືອງ 2005)**

## 2.3 ລະດັບການສຶກສາຂອງກຸ່ມເປົ້າໝາຍ (Education levels of target groups)



PDF created with pdfFactory Pro trial version www.pdffactory.com

ລະດັບການສຶກສາ ຢູ່ ສປປ ລາວ ສະແດງໃນ ຕາຕະລາງ 7.

ເຖິງວ່າໃນຊ່ວງເວລາ 10 ປີຫຼັງນີ້, ລະດັບຄວາມຮູ້ໜັງສືໄດ້ຮັບການພັດທະນາຂຶ້ນຢ່າງຫຼາຍ, ແຕ່ 60% ໃນປີ 1995[5] ເປັນ 73% ໃນປີ 2005, ແຕ່ລະດັບບການສຶກສາຂອງພົນລະເມືອງລາວເວົ້າລວມ ແມ່ນຍັງຕ່ຳ, ໂດຍສະເພາະການສຶກສາວິຊາສະເພາະຊັ້ນສູງ. ໂດຍລວມ, ລະດັບການສຶກສາຢູ່ຊົນນະບົດຈະຕ່ຳກວ່າໃນເມືອງ.

**ຕາຕະລາງ 7 ລະດັບການສຶກສາ (ສຳຫຼວດ 2005)**

| No. | ແຂວງ | ພົນລະເມືອງ 6+ | ບໍ່ມີການສຶກສາ | ປະຖົມ (ປ 1-5) % | | ມັດທະຍົມຕົ້ນ (ລະດັບ 6-8), % | | ມັດທະຍົມປາຍ (ລະດັບ 9-11), % | | ອາຊີວະສຶກສາ | ຊັ້ນກາງ | ຊັ້ນສູງ/ ປະລິນຍາຕີ | ຫຼັງມະຫາວິທະຍາໄລ | ອື່ນໆ |
|---|---|---|---|---|---|---|---|---|---|---|---|---|---|---|
| | | | | C | UC | C | UC | C | UC | % | % | % | % | % |
| 1 | ນະຄອນຫຼວງວຽງຈັນ | 626.952 | 8,9 | 15,4 | 20,1 | 10,3 | 10,2 | 15,1 | 5,3 | 3,3 | 5,9 | 4,1 | 0,7 | 0,7 |
| 2 | ຜົ້ງສາລີ | 139.245 | 52,1 | 8 | 26,6 | 2,9 | 4,4 | 1,3 | 1,5 | 1,6 | 1,2 | 0,3 | 0 | 0,1 |
| 3 | ຫຼວງນ້ຳທາ | 123.061 | 44,5 | 10,6 | 25,5 | 4,2 | 5,3 | 2,5 | 2,7 | 2 | 2 | 0,5 | 0 | 0,1 |
| 4 | ອຸດົມໄຊ | 218.922 | 41,5 | 11 | 31,7 | 3,7 | 5,2 | 1,8 | 1,9 | 1,6 | 1,2 | 0,4 | 0 | 0,1 |
| 5 | ບໍ່ແກ້ວ | 121.699 | 38,6 | 12,4 | 29,9 | 4,6 | 5,5 | 2,6 | 2,5 | 1,5 | 1,4 | 0,5 | 0 | 0,3 |
| 6 | ຫຼວງພະບາງ | 339.260 | 30,3 | 13,8 | 34,4 | 4,6 | 6,1 | 4,1 | 2,5 | 1,7 | 1,7 | 0,5 | 0,1 | 0,1 |
| 7 | ຫົວພັນ | 231.778 | 32,1 | 13,2 | 36,5 | 3,9 | 7,5 | 1,2 | 2,1 | 1,9 | 1,1 | 0,3 | 0 | 0,2 |
| 8 | ໄຊຍະບູລີ | 293.120 | 18,1 | 30,5 | 26,9 | 7,2 | 7,2 | 2,9 | 2,8 | 1,7 | 1,7 | 0,5 | 0,1 | 0,4 |
| 9 | ຊຽງຂວາງ | 191.340 | 25,1 | 14,8 | 31,2 | 7,4 | 10,2 | 2,6 | 3,6 | 2,5 | 1,8 | 0,6 | 0,1 | 0,1 |
| 10 | ວຽງຈັນ | 333.471 | 19,2 | 18,6 | 27,2 | 8,7 | 9,8 | 6,6 | 4,4 | 1,9 | 2,5 | 0,9 | 0,1 | 0,2 |
| 11 | ບໍລິຄຳໄຊ | 188.787 | 20,9 | 19,5 | 33,6 | 6,2 | 8,2 | 3,8 | 3,1 | 1,8 | 2 | 0,6 | 0,1 | 0,2 |
| 12 | ຄຳມ່ວນ | 281.529 | 28,2 | 14,5 | 33,2 | 5,5 | 7,8 | 3,7 | 2,9 | 1,7 | 1,6 | 0,6 | 0,1 | 0,2 |
| 13 | ສະຫວັນນະເຂດ | 700.687 | 30,6 | 13,8 | 33 | 5,5 | 7,1 | 4,5 | 2,5 | 1,1 | 1,3 | 0,5 | 0 | 0 |
| 14 | Salavanh | 266.778 | 37 | 11,7 | 36,2 | 3,5 | 5,5 | 1,9 | 1,6 | 1,2 | 1,1 | 0,3 | 0 | 0 |
| 15 | ເຊກອງ | 67.541 | 39,6 | 8 | 36,9 | 2,7 | 4,3 | 1,5 | 1,7 | 2,1 | 2,3 | 0,8 | 0,1 | 0 |
